# Banking Basics (2009)

ທ່ານສາມາດຝາກເງິນໄວ້ໃນທະນາຄານ

ປື້ມຄູ່ມືເຫຼັ້ມນ້ອຍໆນີ້ ຈະນໍາສເນີເຣື່ອງລາຍລະອຽດຂອງການບໍຣິການຕ່າງໆຂອງທະນາຄານ ແລະມີທັງລາຍລະອຽດກ່ຽວກັບບັນຊີເງິນທໍາມະດາ, ບັນຊີທ້ອນເງິນ, ໃບຢັ້ງຢືນຂອງການຝາກເງິນ ແລະ ບັດແດເບັດ. ແລ້ວປື້ມຄູ່ມືນີ້ຍັງເວົ້າເຖິ່ງການເປີດບັນຊີເງິນທໍາມະດາແລະບັນຊີທ້ອນເງິນ ອີກດ້ວຍ.

Table of Contents


- ທ່ານສາມາດຝາກເງິນໄວ້ໃນທະນາຄານ
- ຕິດຕາມເບິ່ງລູກຄ້າໃໝ່
- ບັນຊີເງິນທໍາມະດາ
- ການໃຊ້ບັດແດເບັດ
- ບັນຊີທ້ອນເງິນ
- ໃບຢັ້ງຢືນຂອງການຝາກເງິນ
- ຕູ້ຝາກເງິນນິຣະໄພ
- ການເປີດບັນຊີເງິນໃໝ່
- ຕິດຕາມບັນຊີຍອດເງິນເຫຼືອ
- ວິທີແກ້ບັນຫາ


## ທ່ານສາມາດຝາກເງິນໄວ້ໃນທະນາຄານ

## ບອນທີ່ຝາກເງິນໄວ້ຢ່າງປອດໄພແລະການໃຊ້ຈ່າຍກໍ່ງ່າຍ ແມ່ນທະນາຄານນັ້ນເອງ

ທະນາຄານ - ພ້ອມທັງທະນາຄານການຄ້າ ແລະທະນາຄານເອກະຊົນຕ່າງໆ ແມ່ນເປັນບໍຣິສັດ ທີ່ທ່ານໄວ້ວາງໃຈໄດ້. ຊໍ້າບໍ່ໜໍາ ທ່ານກໍ່ຍັງສາມາດຖອນເງິນອອກແລະຝາກເງິນເຂົ້າໄດ້ຕາມ ສະບາຍ. ແລ້ວທະນາຄານກໍ່ຍັງເປັນບ່ອນທີ່ລາຍງານໃຫ້ທ່ານໄດ້ຊາບວ່າ ເງິນຂອງທ່ານນັ້ນ ເອົາໄປໃຊ້ຈ່າຍໃສແດ່.

ທະນາຄານເປັນບໍຣິສັດໄດ້ຜົນກໍາໄຣ - ລາຍໄດ້ທີ່ທາງທະນາຄານໄດ້ມາແມ່ນມາຈາກການບໍຣິ ການຕ່າງໆ ແລະດອກເບັ້ຽຈາກການຢືມເງິນກູ້ຢືມຕ່າງໆ. ຣັຖບານເປັນຜູ້ໃຫ້ປະກັນໄພບັນຊີເງິນ ຕ່າງໆ. ປະກັນໄພຂອງທ່ານຂຶ້ນຢູ່ກັບວ່າ ເງິນໃນບັນຊີຂອງທ່ານມີເຫຼືອເທົ່າໃດ ເຊັ່ນ ທາງຣັຖບານ ຈະໃຫ້ປະກັນໄພໄປເຖິງ $250,000 ຕໍ່ລູກຄ້າ. ແຕ່ທ່ານອາດສາມາດໄດ້ປະກັນໄພຫຼາຍກວ່າ $250,000 ຖ້າທ່ານມີບັນຊີເງິນຕ່າງໆ ເຊັ່ນ ບັນຊີເງິນຄູ່ກັບຜູ້ໃດຜູ້ນຶ່ງ, ຫຼື ບັນຊີເງິນເບັ້ຽບໍານານ ທີ່ເອີ້ນວ່າ IRA. ທະນາຄານຕ່າງໆທີ່ມີປະກັນໄພຈາກຣັຖບານຕ້ອງມີໝາຍຕົນກາຂອງຣັຖບານ ເຊັ່ນ FDIC.

ທະນາຄານທີ່ບໍ່ເອົາຜົນກຳໄຣ ແມ່ນທະນາຄານ credit union ເພາະ ທະນາຄານຈຳພວກນີ້ ລູກຄ້າຈະເປັນເຈົ້າຂອງ. Credit Union ບໍຣິການກຸ່ມລູກຄ້າທີ່ມີສິ່ງໃດສິ່ງນຶ່ງທີ່ເໝືອນກັນ ດັ່ງ ພວກເຂົາເຮັດວຽກຢູ່ບໍຣິສັດດຽວກັນ, ພວກເຂົາຢູ່ໃກ້ໝູ່ບ້ານດຽວກັນ ຫຼື ພວກເຂົາເຊື່ອຖືໃນ ສາສນາດຽວກັນ. Credit Union ນີ້ ບໍຣິການທັງບັນຊີທ້ອນເງິນແລະບັນຊີທຳມະດາ ແລະໃຫ້ເງິນຢືມອີກດ້ວຍ ທີ່ມີອັດຕາດີກວ່າທະນາຄານເອກະຊົນ.

ທະນາຄານ The National Credit Union Share Insurance Fund, ເຊິ່ງອົງການ National Credit Union Administration ເປັນເຄືອຄາຍຂອງຣັຖບານໃຫ້ປະກັນໄພໃຫ້ແກ່ທະນາຄານ ພວກນີ້ໄດ້ເຖິງປະມານ $250,000 ຕໍ່ບັນຊີ.

ຖ້າທ່ານຕ້ອງການຢາກເປັນສະມາຊິກ ທ່ານໂທໄປຫາ Credit Union National Association ໄດ້ ຫຼືວ່າ ໄປເບິ່ງໃນແວບໄຊຕ໌ (www.cuna.org).

## ຕິດຕາມເບິ່ງລູກຄ້າໃໝ່

ຖ້າທ່ານເປີດບັນຊີເງິນໃໝ່ແລະທາງທະນາຄານບໍ່ຮັບເອົາທ່ານເປັນສະມາຊິກ ນີ້ກໍ່ໝາຍຄວາມວ່າ ຊື່ຂອງທ່ານ ໄດ້ຖືກເອົາເຂົ້າໄປໃນບັນຊີດຳ ChexSystems ເຊິ່ງເປັນບໍຣິສັດທີ່ເກັບເອົາຊື່ຂອງ ບັນດາຄົນຕ່າງໆໄວ້ທີ່ມີບັນຫາກ່ຽວກັບການໃຊ້ບັນຊີເງິນແລະມີປະວັດບໍ່ດີໃນການຝາກເງິນ ແລະໃນການໃຊ້ຈ່າຍການຢືມເງິນ ຕົວຢ່າງ ຖ້າທ່ານເຄີຍຖອນເງິນອອກເກີນກວ່າຍອດເງິນເຫຼືອ ໃນບັນຊີເງິນແລະບໍ່ເອົາເງິນມາຝາກເຂົ້າແທນດ່ວນ ຊື່ຂອງທ່ານກໍ່ອາດຈະຖືກເອົາເຂົ້າໄປໃນ ບັນຊີດຳນີ້ເປັນໄດ້.

ຕາມກົດໝາຍຂອງຣັຖບານແລ້ວ ບໍຣິສັດ ChexSystems ເປັນບໍຣິສັດພິເສດທີ່ບໍຣິການຄວາມ ສະດວກຄືກັນກັບອົງການ Credit Reporting Bureau ແລະ ຕ້ອງທຳຕາມນະໂຍບາຍຂອງ ອົງການ Fair Credit Reporting Act (FCRA) ທີ່ອົງການ Federal Trade Commission (FTC) ໄດ້ອອກກົດລະບຽບຂໍ້ບັງຄັບວ່າ ຊື່ຂອງທ່ານທີ່ເອົາເຂົ້າໄວ້ໃນບັນຊີດຳນັ້ນ ຈະເກັບໄວ້ໃນທັ້ນ ປະມານຫ້າປີ ນອກຈາກວ່າທາງອົງການ Credit Union ເປັນຜູ້ຖອນຊື່ທ່ານອອກຈາກບັນຊີດຳ ເອງ ແລະການຖອນຊື່ຂອງແຕ່ລະຜູ້ຄົນອອກຈາກບັນຊີດຳນີ້ ກໍ່ຂຶ້ນຢູ່ກັບແຕ່ລະທະນາຄານ.

ທ່ານມີສິດທີ່ຈະຂໍເອົາໜັງສືລາຍງານຈາກ ChexSystems ແຕ່ລະປີ. ໂທຫາໄດ້ເລີຍທີ່ເລກ 800-428-9623 ຫຼື ໄປກົດເບິ່ງໃນແວບໄຊຕ໌ www.consumerdebit.com ເພື່ອເອົາໜັງສືລາຍງານ ຟຣີ. ເມື່ອທະນາຄານບໍ່ຮັບເອົາທ່ານເປັນສະມາຊິກ ທ່ານຄວນຂໍເອົາໜັງສືລາຍງານປະວັດ ທະນາຄານເງິນຂອງທ່ານດ່ວນ ຫຼື ທ່ານຄິດວ່າ ບັນຊີທ່ານຖືກຂີ້ລະໂມຍລັກເອົາເງິນທ່ານ ເຊັ່ນ ມີຄົນຂີ້ລັກເອົາໃບເຊັກ ຫຼື ຄົນຂີ້ລັກປອມລາຍເຊັນທ່ານ. ລາຍງານບັນຊີຂອງທ່ານຈາກອົງການ ChexSystems ຈະມີລາຍລະອຽດທີ່ບອກວິທີໃຫ້ທ່ານໄປ ຕິດຕໍ່ທາບທາມກັບກ່ຽວກັບ ເຣື່ອງຜິດໆດັ່ງນີ້ໄດ້. ແລ້ວອົງການ ChexSystems ຕ້ອງລາຍງານບອກທ່ານຄືນພາຍໃນ 30 ມື້.

SCAN (Shared Check Authroization Network) ແລະ Telecheck ເປັນອົງການ ທີ່ຮັບເອົາເຊັກທີ່ຖືກຕີກັບຄືນຂອງທ່ານເມື່ອທ່ານຂຽນເຊັກຈ່າຍໜີ້ຕ່າງໆ. ຖ້າແມ່ນວ່າ

ເຊັກຂອງທ່ານຖືກຕີກັບຄືນຜ່າຍໃນເວລາທີ່ທ່ານຊຸນເຊັກຈ່າຍໜີ້ຕ່າງໆ ທ່ານສາມາດຂໍເອົາລາຍງານຈາກອົງການ SCAN ໄດ້ ແລະ ໂທໄປເລກ 800-262-7771 ແລະໂທໄປອົງການ Telecheck ເລກທີ 800-835-3243.

## ບັນຊີເງິນທໍາມະດາ

ທ່ານສາມາດຝາກເງິນໄວ້ໃນບັນຊີເງິນທໍາມະດາ ແລະທ່ານກໍ່ສາມາດຖອນເງິນອອກໄດ້ ແລະ ຊຸນເຊັກຊື້ແລະຈ່າຍໜີ້ຕ່າງໆ. ບັນຊີຝາກເງິນຄູ່ທັງຝ່າຍຜົວແລະເມັຽກໍ່ສາມາດໃຊ້ໄດ້ຢ່າງສະດວກສະບາຍ.

ຕາມທໍາມະດາແລ້ວ ທ່ານຈະໄດ້ບັດຖອນເງິນເມື່ອທ່ານມີບັນຊີເງິນໃນທະນາຄານ ແລະທ່ານກໍ່ສາມາດຝາກເງິນເຂົ້າໄດ້ໃນຕູ້ເອທີເອັມ ແລະຖອນເງິນກໍ່ໄດ້ອີກ ຈາກທະນາຄານອື່ນໆ. ບັດຖອນເງິນຈະມີຣະຫັດຂອງທ່ານເອງ (PIN) ". (ເບິ່ງ "Using a debit card.") ພ້ອມດຽວກັນ ທ່ານກໍ່ສາມາດໃຊ້ບັດເອທີເອັມ ແລະຣະຫັດ PIN ຊື້ເຄື່ອງຂອງໄດ້ໃນຕະຫຼາດຕ່າງໆ ແລະ ຖອນເງິນອອກໄດ້ນໍາອີກ.

## ທະນາຄານຕ່າງໆ ພ້ອມທັງທະນາຄານເອກະຊົນ ມີບັນຊີຝາກເງິນຕ່າງໆໃຫ້ທ່ານໄດ້ເລືອກໃຊ້ ເຊັ່ນ:

- ບັນຊີຝາກເງິນທີ່ບໍ່ມີຄ່າບໍຣິການ ແມ່ນບັນຊີຝາກເງິນໂດຍທີ່ບໍ່ມີຄ່າບໍຣິການແຕ່ຢ່າງໃດເລີຍ ແລະກໍ່ບໍ່ຕ້ອງມີການຈໍາກັດໃຫ້ມີຍອດເງິນເຫຼືອໃນບັນຊີເງິນອີກ. ຖ້າທ່ານເລືອກເອົາບັນຊີຝາກເງິນດັ່ງນີ້ ທ່ານຈະຕ້ອງຮັບຮອງວ່າ ລາຍໄດ້ເງິນເດືອນທຸກເທື່ອ ຫຼື ປະກັນໄພພິເສດຕ່າງໆ ຈະໂອນເຂົ້າບັນຊີຝາກເງິນຟຣີນີ້ໂດຍອັດຕະໂນມັດ. ການຝາກເງິນເຂົ້າບັນຊີນີ້ ມັນປອດໄພດີແລະງ່າຍອີກ ເຊັ່ນ ເຊັກຂອງທ່ານກໍ່ຈະບໍ່ເສັຽຫາຍໄປໃສ. ຊໍ້າບໍ່ໜໍາ ທ່ານກໍ່ບໍ່ຕ້ອງເອົາເງິນໄປຝາກຢູ່ທະນາຄານດ້ວຍຕົນເອງ. ທ່ານສາມາດໃຊ້ບັນຊີຝາກເງິນທີ່ບໍ່ມີຄ່າບໍຣິການ ຖ້າວ່າ ທ່ານຝາກເງິນເຂົ້າແລະຖອນເງິນອອກໂດຍໃຊ້ຕູ້ເອທີເອັມເທົ່ານັ້ນ ແລະບໍ່ເອົາເງິນເຂົ້າໄປຝາກກັບຜູ້ບໍຣິການໃນທະນາຄານ.
- ບັນຊີຝາກເງິນທາງ Electronic (ETAs) ນີ້ ທ່ານສາມາດເປີດມັນໄດ້ຖ້າທ່ານໄດ້ຮັບເງິນຈາກຣັຖບານ ເຊັ່ນ Social Security ຫຼື Supple-mental Security Disability Income (SSDI). ບັນຊີດັ່ງກ່າວນີ້ ທ່ານສາມາດໄດ້ບັດເອທີເອັມ ETA ແລະຖອນເງິນອອກໄດ້ສີ່ເທື່ອຕໍ່ເດືອນເທົ່ານັ້ນ. ການຖອນເງິນນັ້ນ ທ່ານສາມາດຖອນອອກຈາກທະນາຄານຂອງທ່ານເອງຫຼືບໍ່ກໍ່ຈາກຮ້ານຄ້າທີ່ຮັບການຈ່າຍທີ່ໃຊ້ບັດເອທີເອັມ. ບັນຊີດັ່ງກ່າວນີ້ ທ່ານບໍ່ສາມາດຊຸນເຊັກຈ່າຍຄ່າຂອງອື່ນໆໄດ້. ຖ້າທ່ານຢາກຮູ້ວ່າທະນາຄານໃດທີ່ມີບັນຊີ ETA ທ່ານໂທໄປເລກ 888-382-3311 ໄດ້ ຫຼືບໍ່ກໍ່ໄປເບິ່ງໃນອອນໄລນ໌ www.eta-find.gov.
- ບັນຊີຝາກເງິນ Basic ຫຼື Life ນີ້ ທ່ານບໍ່ຕ້ອງມີເງິນຍອດເຫຼືອເລີຍ ຫຼື ມີພຽງແຕ່ເງິນກ້ອນນ້ອຍໆໃນບັນຊີເທົ່ານັ້ນ. ອັນນີ້ກໍ່ໝາຍຄວາມວ່າ ທາງທະນາຄານຈະບໍ່ປັບໃໝເອົາຄ່າບໍຣິການເມື່ອເງິນໃນບັນຊີຂອງທ່ານລຸດລົງ.

ບາງຣັຖມີກົດລະບຽບໃຫ້ທະນາຄານຕ່າງໆ ມີບັນຊີນີ້ ເພື່ອບໍຣິການລູກຄ້າທີ່ມີເງິນເດືອນຕໍ່າ. ບັນຊີຈໍາພວກນີ້ ມີການຈໍາກັດໃຊ້ໃບເຊັກ.

- ບັນຊີເງິນທາງອອນໄລນ໌ ທ່ານສາມາດເປີດເບິ່ງບັນຊີເງິນຂອງທ່ານຕ່າງໆໄດ້. ຖ້າທ່ານເປີດບັນຊີທາງອອນໄລນ໌ນີ້ ທ່ານຈະຕ້ອງຝາກເງິນທາງໄປສະນີ, ຝາກທາງຕູ້ເອທີເອມ ຫຼືບໍ່ກໍ່ຝາກເງິນຈາກບ່ອນທໍາງານຂອງທ່ານໂດຍຕົງ. ອີກຢ່າງນຶ່ງ ບັນຊີນີ້ ທ່ານຖອນເງິນອອກໄດ້ຈາກແຕ່ຕູ້ເອທີເອັມຂອງທະນາຄານຂອງທ່ານເທົ່ານັ້ນ ຖ້າທ່ານຖອນເງິນອອກຈາກທະນາຄານອື່ນ ທ່ານຈະເສັຽຄ່າບໍຣິການຈາກທະນາຄານນັ້ນ. ບາງທະນາຄານຈະໃຫ້ທ່ານຈ່າຍຄ່າໜີ້ສິນຕ່າງໆທາງອິນເຕີແນດໄດ້. ເພື່ອຮັບປະກັນເງິນຝາກຂອງທ່ານ ທາງທະນາຄານຈະຕ້ອງມີ FDIC.
- ບັນຊີເງິນໃຫ້ສໍາລັບຜູ້ເຖົ້າແລະນັກຮຽນໃຊ້ ແມ່ນບັນຊີເງິນທີ່ກຸ່ມຜູ້ຄົນດັ່ງກ່າວມີເງິນຝາກຕໍ່າສຸດຫຼືບໍ່ມີເງິນຝາກເລີຍ. ການຂຽນເຊັກກໍ່ຈໍາກັດ ແລະບາງທີ່ກໍ່ມີຄ່າບໍຣິການ ຖ້າທ່ານຂຽນເຊັກກາຍເກີນກໍາໜົດ.

## ການໃຊ້ບັດແດເບັດ

ຖ້າທະນາຄານຂອງທ່ານບໍຣິຈາກບັດເອທີເອັມ (ATM) ທີ່ມີກາ MasterCard ຫຼືກາ Visa ແມ່ນທ່ານມີບັດແດເບັດແລະບັດນີ້ ໃຊ້ກັບທະນາຄານທ່ານໄດ້. ເມື່ອທ່ານໃຊ້ມັນ ເງິນໃນບັນຊີເງິນຂອງທ່ານຈະຖືກຖອນອອກໄປຈ່າຍໃຫ້ບໍຣິສັດທີ່ທ່ານຊື້ເຄື່ອງຂອງຈາກ. ບັດນີ້ ສາມາດໃຊ້ໄດ້ທຸກໆບ່ອນທຸກໆແຫ່ງເມື່ອມັນມີກາ MasterCard ຫຼືກາ Visa ແລະຍັງໃຊ້ໄດ້ໃນຕ່າງປະເທດອີກດ້ວຍ.

## ສອງວິທີທ່ານສາມາດໃຊ້ບັດແດເບັດໄດ້ຄື:

- ເວລາໃຊ້ບັດແດເບັດຢູ່ຕູ້ເອທີເອັມ ຫຼື ຕູ້ເງິນຢູ່ໃນຮ້ານຂາຍຂອງຕ່າງໆ (POS), ທ່ານຕ້ອງກົດຣະຫັດ(PIN) ໃສ່.
- ນອກຈາກນັ້ນແລ້ວ ທ່ານຍັງສາມາດໃຊ້ບັດແດເບັດໃນນຮ້ານຄ້າຕ່າງໆໄດ້ ແລະຮ້ານອາຫານທີ່ຮັບເອົາບັດເຄດິດ ແລະ ທ່ານກໍ່ບໍ່ຕ້ອງໃຊ້ຣະຫັດເລີຍ ພຽງແຕ່ວ່າທ່ານຈະຕ້ອງເຊັນລາຍເຊັນລົງໃນບັນຊີ.

## ຣະມັດຣະວັງໃນການໃຊ້ບັດແດເບັດ

ພະຍາຍາມຕິດຕາມເບິ່ງການໃຊ້ຈ່າຍກັບບັດແດເບັດຂອງທ່ານ. ຖ້າທ່ານຄິດວ່າ ບັດແດເບັດຂອງທ່ານຖືກຄົນຂີ້ລັກເອົາໄປໃຊ້ ທ່ານຄວນໂທແຈ້ງບອກໃຫ້ທາງທະນາຄານຊາບດ່ວນ.

ເມື່ອບັດແດເບັດຂອງທ່ານເສັຽຫຼືຖືກຄົນອື່ນລັກເອົາໄປ ຄົນອື່ນເອົາໄປໃຊ້ໄດ້ງ່າຍຍ້ອນວ່າພວກເຂົາບໍ່ຕ້ອງຕີຣະຫັດ PIN ເຂົ້າ. ທ່ານເປັນຜູ້ຮັບຜິດຊອບເອງຖ້າຄົນອື່ນເອົາບັດແດເບັດຂອງທ່ານໄປໃຊ້. ແຕ່ທ່ານອາດບໍ່ຕ້ອງກັງວົນໃນເຣື່ອງນີ້ເລີຍເປັນໄດ້ ເພາະ ຖ້າຄົນອື່ນບໍ່ໄດ້ຮັບຄໍາອະນຸຍາດເອົາບັດແດເບັດຂອງທ່ານໄປໃຊ້ ທ່ານບໍ່ຕອງຮັບຄວາມຜິດຊອບແມ້ແຕ່ຢ່າງໃດ

ແຕ່ທ່ານຈະຕ້ອງໃຊ້ເວລາຫຼາຍເພື່ອທີ່ຈະຢືນຢັນໄດ້ວ່າ ບັນຫານີ້ ແມ່ນເຣື່ອງຈິງແລະທ່ານຕ້ອງການໃຫ້ທາງທະນາຄານຄືນເງິນໃຫ້ທ່ານ.

## ບັນຊີທ້ອນເງິນ

## ບັນຊີທ້ອນເງິນເປັນບັນຊີທີ່ປອດໄພແລະເງິນຂອງທ່ານກໍ່ສາມາດໄດ້ກິນຂີ້ດອກນຳອີກ.

ເວລາທ່ານເປີດບັນຊີທ້ອນເງິນ ທາງທະນາຄານອາດຈະເອົາປື້ມນ້ອຍໆໃຫ້ທ່ານ ເພື່ອວ່າທ່ານຢາກໄລ່ບັນຊີເງິນການໃຊ້ຈ່າຍຕ່າງໆ. ດຽວນີ້ ບາງທະນາຄານບໍ່ໃຊ້ປື້ມນ້ອຍໆນີ້ອີກແລ້ວ ແຕ່ທາງທະນາຄານຈະສົ່ງໃບລາຍງານເງິນໃນບັນຊີມາໃຫ້ທ່ານທຸກໆເດືອນ ຫຼື ສີ່ເທື່ອຕໍ່ປີ. ທ່ານສາມາດຂໍບັດເອທີເອັມເພື່ອເອົາມາໃຊ້ໃນການຝາກເງິນຫຼືຖອນເງິນ. ທ່ານຍັງສາມາດເອົາໃບຝາກເງິນຫຼືໃບຖອນເງິນເຂົ້າໄປຫາຜູ້ບໍຣິການໃນທະນາຄານໄດ້ອີກ. ທ່ານສາມາດຖອນເງິນອອກໄດ້ ແຕ່ມັນກໍ່ຂຶ້ນຢູ່ກັບແຕ່ລະທະນາຄານແລະບັນຊີທ້ອນເງິນຂອງທ່ານ. ການຖອນເງິນອອກຈະມີຂໍ້ຈຳກັດໃນແຕ່ລະເດືອນ.

ເງິນທີ່ທ່ານຝາກໄວ້ໃນບັນຊີທ້ອນເງິນຈະໄດ້ກິນດອກເບັ້ຽ. ສ່ວນຫຼາຍ ທະນາຄານບໍ່ໃຫ້ດອກເບັ້ຽສູງ ດອກເບັ້ຽຢ່າງເກັ່ງແມ່ນ 1% ຫຼື 2% ເທົ່ານັ້ນ. ດອກເບັ້ຽແມ່ນເປີເຊັນຂອງເງິນທັງໝົດທີ່ມີແຕ່ລະປີ ຄື ຂີ້ດອກທີ່ທ່ານອາດໄດ້ມັນມາຖ້າທ່ານຝາກເງິນໄວ້ໝົດປີ. ປະຈຸບັນນີ້ ທາງທະນາຄານໃຫ້ພຽງແຕ່ 1% ເທົ່ານັ້ນ. ຕົວຢ່າງ ຖ້າທ່ານມີ $1,000 ໃນບັນຊີທ້ອນເງິນ ທ່ານໄດ້ດອກເບັ້ຽພຽງແຕ່ $10 ເທົ່ານັ້ນ.

ດອກເບັ້ຽມີສອງຊະນິດ: ດອກເບັ້ຽທຳມະດາແລະດອກເບັ້ຽປະສົມ. ດອກເບັ້ຽປະສົມນີ້ດີກວ່າໝູ່ ເພາະ ທ່ານສາມາດໄດ້ກິນຂີ້ດອກເມື່ອທ່ານຝາກເງິນຕົ້ນທຶນ ແລ້ວເງິນຕົ້ນທຶນແລະເງິນຂີ້ດອກສາມາດກິນຂີ້ດອກເພີ້ມເຕີມເລື້ອຍໆໄປ. ທາງທະນາຄານເອີ້ນການກິນຂີ້ດອກແບບນີ້ວ່າ annual percentage yield (APY).

## ໃບຢັ້ງຢືນເງິນຝາກ

ໃບຢັ້ງຢືນເງິນຝາກຫຼືຊີດີ CD ມີດອກເບັ້ຽຄ້ຳປະກັນສຳລັບທ່ານທີ່ຝາກເງິນໄວ້ເປັນເວລາດົນ ເຊັ່ນ ນຶ່ງປີ. ທ່ານສາມາດເລືອກເວລາຝາກເທົ່າໃດກໍ່ໄດ້. ຖ້າທ່ານຝາກໄວ້ດົນ ທ່ານກໍ່ໄດ້ດອກເບັ້ຽສູງ. ຖ້າທ່ານຖອນເງິນອອກກ່ອນເວລາກຳນົດ ທ່ານກໍ່ຈະເສັຽດອກເບັ້ຽ. ຫຼາຍໆທະນາຄານຈະມີການປັບໃໝ ຖ້າທ່ານຖອນເງິນອອກກ່ອນເວລາກຳນົດ. ທ່ານອາດສູນເສັຽເງິນທີ່ທ່ານຝາກໄວ້ຈາກການປັບໃໝ.

## ຕູ້ຝາກເງິນນິຣະໄພ

ຕູ້ຝາກເງິນນິຣະໄພເປັນບ່ອນທີ່ທ່ານເກັບກຳເອົາເອກະສານຫຼືສິ່ງສຳຄັນຕ່າງໆໄວ້ໃນຍາມສຸກເສີນ ເຊັ່ນ ໄຟໄໝ້, ນ້ຳຖ້ວມ ຫຼື ມີຄົນຂີ້ລະໂມຍມາລັກເອົາສິ່ງຂອງໃນເຮືອນ.

ຕູ້ດັ່ງກ່າວດີສຳລັບທ່ານທີ່ຢາກມີບ່ອນທີ່ໄວ້ຂອງສ່ວນຕົວແດ່ໜ້ອຍນຶ່ງ. ບາງບໍຣິສັດລຸດລາຄາຄ່າຈ່າຍປະກັນໄພ ຖ້າທ່ານເອົາເອກະສານແລະສິ່ງຂອງດັ່ງກ່າວໄວ້ໃນຕູ້ເງິນນິຣະໄພໃນທະນາຄານກວ່າເອົາໄວ້ຢູ່ເຮືອນທ່ານເອງ. ຢ່າເອົາໄວ້ເປັນເດັດຂາດ ພີໃນກຳເດີມຫຼືປະກັນໄພຊີວິດໃນຕູ້ເງິນນິຣະໄພ ເພາະ ເມື່ອທ່ານເສັຽຊີວິດໄປແລ້ວ ທາງທະນາຄານອາດປິດຕູ້ນີ້ໄວ້ ແລະທາງຄອບຄົວຂອງທ່ານຕ້ອງໄປຂໍເອົາໃບອະນຸຍາດຈາກສານຂໍເປີດຕູ້ນີ້.

## ການເປີດບັນຊີເງິນໃໝ່

ຖ້າທ່ານຈະເປີດບັນຊີເງິນໃໝ່ ທ່ານຄວນໄປຫາທະນາຄານໂດຍຕົງ. ເອົາບັດແລະເອກະສານຢັ້ງຢືນຕ່າງໆໄປນຳ ແລະ ບັດ Social Security. ຖ້າທ່ານບໍ່ມີບັດໃບຂັບຂີ່, ບັດປະຈຳໂຕ ແລະໜັງສືຜ່ານແດນ, ທ່ານຄວນໂທໄປຖາມທະນາຄານກ່ອນວ່າ ທ່ານຄວນເອົາເອກະສານຫຍັງໄປແດ່.

ເອົາເງິນໄປພ້ອມ-ເງິນສົດຫຼືເຊັກ-ເພື່ອເອົາໄປຈ່າຍຄ່າເປີດບັນຊີເງິນ. ໂທຖາມເບິ່ງກ່ອນວ່າທະນາຄານໃຫ້ງົບປະມານເທົ່າໃດທີ່ທ່ານຕ້ອງເອົາເງິນໄປໂອນເຂົ້າບັນຊີເງິນໃໝ່.

## ເພື່ອຊ່ວຍທ່ານຊອກຫາທະນາຄານທີ່ດີ

ທ່ານຄວນຖາມວ່າ ທ່ານສາມາດເປີດບັນຊີເງິນ Lifeline ຫຼື ETA ໄດ້ບໍ່. ບອກຜູ້ບໍຣິການທະນາຄານວ່າ ທ່ານຕ້ອງການໃຊ້ບັນຊີເງິນຊະນິດໃດ. ຕົວຢ່າງ ບອກຜູ້ບໍຣິການວ່າ ທ່ານໃຊ້ເຊັກບໍ່ຫຼາຍເທົ່າໃດຕໍ່ເດືອນ ຫຼືວ່າ ທ່ານບໍ່ສຳນານໃນການໃຊ້ບັດເອທີເອັມ. ທ່ານຄວນຖາມຄຳຖາມພວກນີ້:

- ຂ້ອຍຕ້ອງເອົາເງິນຝາກກ່ອນເທົ່າໃດ?
- ດອກເບັ້ຽມີເທົ່າໃດ?
- ຄ່າບໍຣິການຕໍ່ເດືອນນີ້ ແມ່ນເທົ່າໃດ?
- ມີວິທີໃດແດ່ທີ່ຂ້ອຍບໍ່ຕ້ອງຈ່າຍຄ່າບໍຣິການແຕ່ລະເດືອນ?
- ຖ້າເງິນໃນບັນຊີເງິນຂອງຂ້ອຍລຸດລົງ ຂ້ອຍຕ້ອງຈ່າຍຄ່າບໍຣິການຫຍັງແດ່?
- ຂ້ອຍສາມາດຂຽນເຊັກໄດ້ເທົ່າໃດຕໍ່ເດືອນ?
- ຄ່າໃຊ້ຕູ້ເອທີເອັມນີ້ ແມ່ນເທົ່າໃດ? ຖ້າໃຊ້ຕູ້ເອທີເອັມຂອງທະນາຄານອື່ນເດ?

ທ່ານສາມາດຊື້ເຊັກຂອງຕົນເອງໄດ້ຈາກທະນາຄານ. ບາງທະນາຄານເອົາປະມານ $25 ຕໍ່ 200 ເຊັກ ຫຼື ຈາກບໍຣິສັດໂຮງພິມເຊັກ ທີ່ເອົານຳລາຄາບໍ່ແພງ ເຊັ່ນມີຢູ່ສອງບໍຣິສັດ:

- Check in the Mail, 800-733-4443, www.citm.com
- Current, 800-848-2848, www.currentcatalog.com

## ການໄລ່ບັນຊີຍອດເງິນເຫຼືອຂອງປຶ້ມເຊັກ

ທາງທະນາຄານຈະສົ່ງໜັງສືລາຍງານມາໃຫ້ທ່ານ. ກວດເບິ່ງດ່ວນເມື່ອທ່ານໄດ້ຮັບມັນແລ້ວວ່າ ເງິນຝາກ, ເງິນຖອນ ແລະ ເຊັກທີ່ຂຽນໄປນັ້ນ ຖືກໝົດຫຼືບໍ່.

ພະຍາຍາມກວດເບິ່ງບັນຊີເງິນເປັນປະຈຳ. ເມື່ອໜັງສືລາຍງານມາຮອດແລ້ວ, ທ່ານຄວນກວດເບິ່ງແລະແກ້ບັນຫາໃດໆທີ່ທ່ານຊອກເຫັນ. ໃນໜັງສືຈະມີຄຳອະທິບາຍບອກວິທີແກ້ບັນຫາຕ່າງໆ.

## ວິທີທີ່ຈະລົດຜ່ອນຄ່າຈ່າຍບໍຣິການ

- ຖາມທາງທະນາຄານວ່າ ທ່ານສາມາດບອກເອົາເງິນໃນບັນຊີເງິນທຳມະດາ ແລະບັນຊີທ້ອນເງິນເຂົ້າກັນໄດ້ຫຼືບໍ່ ເພື່ອໃຫ້ມີເງິນໃນບັນຊີຂອງທ່ານເຕັມຕາມກຳນົດຍອດເງິນເຫຼືອ ເຊິ່ງມັນຈະບໍ່ເຮັດໃຫ້ທ່ານຕ້ອງຈ່າຍຄ່າການບໍຣິການຕ່າງໆ.
- ຜ່ອນຄ່າຈ່າຍການບໍຣິການລົງໂດຍໃຊ້ຕູ້ເອທີເອັມຂອງທະນາຄານທ່ານເອງເທົ່ານັ້ນ ຫຼືບໍ່ກໍ່ໃຊ້ພຽງແຕ່ທະນາຄານທີ່ບໍ່ເອົາຄ່າບໍຣິການ. ບໍ່ດັ່ງນັ້ນ ທ່ານຄວນເອົາເງິນອອກມາໃຊ້ລ່ວງໜ້າໄວ້ຫຼາຍໆ ເພື່ອວ່າທ່ານຈະບໍ່ໄດ້ເສັຽຄ່າບໍຣິການໃຊ້ຕູ້ເອທີເອັມຂອງທະນາຄານອື່ນໆ.
- ໃຊ້ການຝາກເງິນໂດຍຕົງຈາກບໍຣິສັດທີ່ທ່ານເຮັດວຽກຫຼືເງິນພິເສັດທີ່ໄດ້ມາຈາກຣັຖບານ. ເງິນນັ້ນຖືກໂອນເຂົ້າໄປໃນບັນຊີເງິນຂອງທ່ານຢ່າງອັດຕະໂນມັດ ແລະໄວທີ່ສຸດ, ປອດໄພດີ ແລະ ງ່າຍອີກດ້ວຍ. ຊ້ຳບໍ່ໜຳ ທ່ານອາດໄດ້ບັນຊີເງິນທີ່ບໍ່ມີຄ່າບໍຣິການອີກ.
- ຊື້ເຊັກຈາກບໍຣິສັດໂຮງພິມເຊັກ.
- ຂໍໃຫ້ທາງທະນາຄານອະນຸໂລມຄ່າບໍຣິການຕ່າງໆ ເຊັ່ນ ການຈ່າຍໜີ້ຊ້າຫຼືເຊັກເດັ້ງ.
- ຊື້ປະກັນໄພສຳລັບເມື່ອທ່ານຈ່າຍເງິນເກີນເງິນທີ່ມີຢູ່ໃນບັນຊີເງິນ. ມັນເປັນບໍຣິການທີ່ດີ ແລະບໍ່ເສັຽຫຼາຍກວ່າໃນເວລາເຊັກທ່ານເດັ້ງ.

## ວິທີແກ້ໄຂບັນຫາ

ເງິນທ່ານເອົາໄປຝາກບໍ່ແມ່ນຂອງທ່ານ, ເງິນທີ່ທ່ານຈ່າຍໜີ້ສິນຕ່າງໆບໍ່ມີລາຍງານໃນບັນຊີ ຫຼືບັດແດເບັດຖືກຖອນເງິນອອກສອງເທື່ອ. ຄວາມຜິດພາດດັ່ງກ່າວພວກນີ້ ບໍ່ເກີດຂຶ້ນທຸກໆມື້ ແຕ່ເມື່ອມັນໄດ້ເກີດຂຶ້ນກັບທ່ານແລ້ວ ທ່ານຄວນໄປລາຍງານດ່ວນ ເພາະກົດໝາຍໃຫ້ກຳນົດເວລາທີ່ທ່ານສາມາດຕໍ່ວ່າໄດ້.

## ຖ້າທ່ານມີບັນຫາໃດໆ ທ່ານສາມາດໂທໄປຫາຜູ້ບໍຣິການທະນາຄານຫຼືໄປຫາທະນາຄານໂດຍຕົງ.

ຖາມຊື່ນາມຂອງຜູ້ຊ່ວຍແລະຂຽນລົງໄວ້. ເວລາທ່ານໄປເວົ້າກັບຜູ້ບໍຣິການໃນທະນາຄານ ທ່ານສເນີການແກ້ບັນຫາໃນມື້ທີ່ມັນເກີດຂຶ້ນກັບທ່ານໃຫ້ຜູ້ບໍຣິການໂລດ. ຢ່າໃຊ້ອາລົມ ເພາະຖ້າທ່ານມີປາກມີສຽງກັບຜູ້ບໍຣິການ ພວກເຂົາຈະບໍ່ຊ່ວຍທ່ານແກ້ບັນຫາໃຫ້ທ່ານເລີຍ.

ຂຽນຂໍ້ສະຫຼຸບຫຍໍ້ໆກ່ຽວກັບເຫດການຕ່າງໆລົງ ແລະສົ່ງໄປໃຫ້ທະນາຄານຮູ້. ພິມໃບສຳເນົາແລະ ເອົາສົ່ງໄປນຳ. ໜັງສືຂອງທ່ານສະແດງໃຫ້ເຫັນວ່າ ທ່ານຕ້ອງການແກ້ບັນຫາດ່ວນ.

ຖ້າທ່ານຍັງບໍ່ພໍໃຈໃນຄຳຕອບຫຼືການຊ່ວຍເຫຼືອຈາກທາງທະນາຄານ, ທ່ານສາມາດຕໍ່ວ່າໄປຍັງ ເຈົ້າໜ້າທີ່ຮັກສາເບິ່ງລະບຽບຂອງການປະຕິບັດຂອງທະນາຄານ ເຊັ່ນ.

- ທະນາຄານທີ່ມີຄຳສັບ “national” ຢູ່ໃນຊື່ ຫຼືມີ “N.A.” ຕາມຫຼັງຊື່ແລ້ວ ແມ່ນຈະມີເຈົ້າໜ້າທີ່ຮັກສາເບິ່ງການປະຕິບັດຂອງທະນາຄານນັ້ນວ່າ ປະຕິບັດຕາມກົດລະບຽບຫຼືບໍ່ ເຊັ່ນ ອົງການ Comptroller of the Currency, 800-613-6743 (www.helpwithmybank.gov).
- ທະນາຄານທີ່ມີບັນຊີເງິນທ້ອນແລະເງິນກູ້ຢືມ ຈະຖືກເຈົ້າໜ້າທີ່ຈາກອົງການ Office of the Thrift Supervision ຮັກສາເບິ່ງການປະຕິບິດຂອງທະນາຄານ ແລະທ່ານໂທໄປຫາໄດ້ໂດຍເລກ, 800-842-6929 (www.ots.treas.gov).
- ທະນາຄານຂອງແຕ່ລະຣັຖຈະຖືກເຈົ້າໜ້າທີ່ຮັກສາເບິ່ງທະນາຄານຈາກອົງການຂອງ ຣັຖ. ຖ້າທ່ານຢາກຮູ້ວ່າ ຣັຖທ່ານມີອົງການໃດແດ່ ທ່ານໄປເບິ່ງໄດ້ໃນປຶ້ມໂທຣະສັບ ໜ້າຂາວຫຼືກົດເບິ່ງ (http://consumeraction.gov/banking.shtml).
- ທະນາຄານ federal chartered credit unions ແມ່ນຖືກເຈົ້າໜ້າທີ່ຈາກອົງການ National Credit Union Administration ຮັກສາເບິ່ງການປະຕິບັດຂອງທະນາຄານ ແລະທ່ານໂທໄປຫາໄດ້ໂດຍເລກ, 703-518-6330 (www.ncua.gov).

ຖ້າທ່ານຄິດວ່າ ທະນາຄານຂອງທ່ານບໍ່ໄດ້ຕົກຢູ່ໃນກໍຣະນີດັ່ງກ່າວ ທ່ານຕິດຕໍ່ອົງການ FDIC ທີ່ເລກ 800-934-3342 ໄດ້ ເຊິ່ງອົງການນີ້ ມີເຈົ້າໜ້າທີ່ໆຮັກສາເບິ່ງການປະຕິບັດຂອງ ທະນາຄານທີ່ມີປະກັນໄພຈາກFDIC.